# 『 ມີໂມງນ້ອຍສຳລັບນັກຮຽນ 』



【ຊັ້ນຮຽນ】 ປີ 2

【ຈຸດປະສົງ-ແນໃສ່】 ໃຫ້ນັກຮຽນສາມາດ ອ່ານໂມງແລະເຂົ້າໃຈລະບົບຕາມຈຳນວນໃນພື້ນຖານ ຫົກສິບໂດຍໃຫ້ນັກຮຽນແຕ່ລະຄົນປະຕິບັດການປິ່ນ ເຂັມສັ້ນແລະເຂັມຍາວຂອງໂມງຕົວຈິງ.

【ວັດຖຸທີ່ຜະລິດ】

- ເຈ້ຍຮູບຂອງໂມງແລະຮູບຂອງເຂັມ (ຕິດຄັດຢູ່)
- ເຈ້ຍສີໃສສຳລັບການລິດ (ບໍ່ມີກໍ່ໄດ້)

【ຂັ້ນຕອນຂອງການສອນ】

【 ການອ່ານໂມງ 】… ຕົວຢ່າງຄຳຖາມ

①ການອ່ານໂມງ …「(ກຳນົດເວລາ3ໂມງໄວ້) ໂມງນີ້ບອກເວລາຈັກໂມງ?」

②ນາທີ (ປະຈຳ10ນາທີ) …「(ກຳນົດເວລາ1ໂມງ30ນາທີໄວ້) ໂມງນີ້ບອກເວລາຈັກໂມງຈັກນາທີ?」

③ນາທີ (ປະຈຳ1ນາທີ) …「(ກຳນົດເວລາ6ໂມງ12ນາທີໄວ້) ໂມງນີ້ບອກເວລາຈັກໂມງຈັກນາທີ?」

④ຕອນເຊົ້າ,ຕອນທ່ຽງ,ຕອນແລງ…「(ກຳນົດເວລາ8ໂມງໄວ້) 8ໂມງທີ່ເວລາໂຮງຮຽນເລີ່ມແມ່ນຕອນເຊົ້າບໍ່? ຫຼືຕອນແລງບໍ່?」

【 ການສະແດງເວລາ 】

①ການຊີ້ເຂັມໂມງ (ເຂັມສັ້ນ) …「ຈົ່ງໃຫ້ເຂັມສັ້ນ(ສີແດງ)ຊີ້ເວລາ3ໂມງ.」

②ການຊີ້ເຂັມນາທີ (ເຂັມຍາວ) …「ຈົ່ງໃຫ້ເຂັມຍາວ(ສີຟ້າ)ຊີ້ເວລາ5ນາທີ.」

③ການຊີ້ທັງເຂັມໂມງແລະເຂັມນາທີ…「ຈົ່ງປິ່ນເຂັມສັ້ນແລະເຂັມຍາວແລ້ວສະແດງເວລາ6ໂມງ15ນາທີ.」

【 ການບວກຫົວໜ່ວຍວັດແທກເວລາ 】

①ການບວກເວລາໂມງ …「ຈົ່ງປິ່ນເຂັມໂມງເຮັດໃຫ້6ໂມງຕື່ມ2ຊົ່ວໂມງ.」

②ການບວກເວລານາທີ (ບໍ່ມີຈື່1ຈົນເຖິງຫົວໜ່ວຍໂມງ) …「ຈົ່ງປິ່ນເຂັມນາທີເຮັດໃຫ້30ນາທີຕື່ມ15ນາທີ.」

③ການບວກເວລານາທີ (ມີຈື່1ຈົນເຖິງຫົວໜ່ວຍໂມງ) …「ຈົ່ງປິ່ນເຂັມນາທີເຮັດໃຫ້30ນາທີຕື່ມ45ນາທີ.」

【 ການລົບຫົວໜ່ວຍວັດແທກເວລາ 】

①ການລົບເວລາໂມງ …「ຈົ່ງປິ່ນເຂັມໂມງເຮັດໃຫ້6ໂມງລົບ2ຊົ່ວໂມງ.」

②ການລົບເວລານາທີ (ບໍ່ມີຢືມ60ຈາກຫົວໜ່ວຍໂມງ) …「ຈົ່ງປິ່ນເຂັມນາທີເຮັດໃຫ້30ນາທີລົບ15ນາທີ.」

③ການລົບເວລານາທີ (ມີຢືມ60ຈາກຫົວໜ່ວຍໂມງ) …「ຈົ່ງປິ່ນເຂັມນາທີເຮັດໃຫ້30ນາທີລົບ45ນາທີ.」

④



?

ໂຈດເລກ :「ຄົນຜູ້ໜຶ່ງອອກຈາກເຮືອນລາວເວລາ10ໂມງ12ນາທີແລະໄປຮອດບ່ອນຈຸດໝາຍ ເວລາ12ໂມງ24ນາທີ.ຖາມວ່າຄົນຜູ້ນັ້ນໃຊ້ເວລາໄປຕາມທາງດົນປານໃດ?」


12
1
2
3
4
5
6
7
8
9
10
11
60
05
10
15
20
25
30
35
40
45
50
55
0


12
1
2
3
4
5
6
7
8
9
10
11
60
05
10
15
20
25
30
35
40
45
50
55
0